# ຄຳຖາມທີ່ຖືກຖາມເລື້ອຍໆ ກ່ຽວກັບ ຢາວັກຊີນ ໂຄວິດ-19

ມີພຽງແຕ່ພວກເຮົາ ທີ່ຈະເບິ່ງແຍງດູແລພວກເຮົາເອງໄດ້. ຖ້າເຮົາຟ້າວສັກຢາວັກຊີນໄວເທົ່າໃດ, ເຮົາກໍຈະເຕົ້າໂຮມຮ່ວມຊຸມຊົນກັນອີກໄດ້. ຕໍ່ໄປນີ້ແມ່ນຄຳຕອບຕ່າງໆ ສຳລັບຄຳຖາມທີ່ຖືກຖາມເລື້ອຍໆ ກ່ຽວກັບ ຢາວັກຊີນ ໂຄວິດ-19.



**ຄຳຖາມ: ຂ້ອຍສາມາດຕິດເຊື້ອ ໄວຣັສ ໂຄວິດ-19 ຈາກການສັກຢາວັກຊີນ ໂຄວິດ-19 ໄດ້ບໍ?**

**ຄຳຕອບ:** ບໍ່, ຢາວັກຊີນ ໂຄວິດ-19 ຈະບໍ່ມີເຊື້ອ ໄວຣັສໂຕເປັນໆ ໃນຢາວັກຊີນນັ້ນເລີຍ.



## ຄຳຖາມ: ຢາວັກຊີນ ໂຄວິດ-19 ຈະມີຜົນຂ້າງຄຽງຮ້າຍແຮງບໍ?

**ຄຳຕອບ:** ຄົນສ່ວນຫຼາຍຈະປະສົບຜົນຂ້າງຄຽງທີ່ອາດບໍ່ຮ້າຍແຮງປານໃດຫຼືຮ້າຍແຮງລະດັບປານກາງ ເປັນເວລາບໍ່ເກີນສາມວັນ. ຄົນອື່ນໆ ອາດຈະມີຜົນຂ້າງຄຽງທີ່ຮ້າຍແຮງ ແຕ່ຈະບໍ່ເກີນສາມວັນຄືກັນ. ຜົນຂ້າງຄຽງນີ້ຈະລວມທັງອາການປວດຫົວ, ອາການໜາວສັ່ນ, ອາການປວດທີ່ຈຸດສັກຢາ, ແລະອາການເມື່ອຍເພຍ. ການມີຜົນຂ້າງຄຽງນັ້ນ ໝາຍຄວາມວ່າຮ່າງກາຍຂອງເຮົາກຳລັງສ້າງຄວາມເຂັ້ມແຂງໃນການປົກປ້ອງຕ້ານທານນັ້ນເອງ.

## ຄຳຖາມ: ຖ້າຂ້ອຍຕັດສິນໃຈໄປສັກຢາວັກຊີນ, ຂ້ອຍຕ້ອງສັກຢາຈັກເຂັມ?

**ຄຳຕອບ:** ມັນຈະຂຶ້ນກັບຢາວັກຊີນຍີ່ຫໍ້ໃດທີ່ທ່ານສັກນັ້ນ.

- ຢາວັກຊີນ ຂອງ ຈອນຊັນ & ຈອນຊັນ ຕ້ອງສັກພຽງແຕ່ເຂັມດຽວ
- ຢາວັກຊີນ ຂອງ ໄຟເຊີ ຕ້ອງສັກສອງເຂັມ ເຊິ່ງມີລະຍະຫ່າງກັນເປັນ 21 ວັນ ລະຫວ່າງເຂັມທຳອິດ ແລະ ເຂັມທີ່ສອງ.
- ຢາວັກຊີນ ຂອງ ມໍເດີນາ ຕ້ອງສັກສອງເຂັມ ເຊິ່ງມີລະຍະຫ່າງກັນເປັນ 28 ວັນ ລະຫວ່າງເຂັມທຳອິດ ແລະ ເຂັມທີ່ສອງ.

## ຄຳຖາມ: ຢາວັກຊີນ ໂຄວິດ-19 ປອດໄພແລະມີປະສິດທິພາບບໍ?

**ຄຳຕອບ:** ແມ່ນແລ້ວ, ມີຫຼັກຖານທີ່ຊີ້ແຈງວ່າຢາວັກຊີນເຫຼົ່ານີ້ປອດໄພດີ. ຢາວັກຊີນທຸກຊະນິດໄດ້ຮັບການທົດລອງທາງດ້ານການຊ່ວຍ ໂດຍຜ່ານຫຼາຍໆ ຄົນມາແລ້ວ.

- ແມ່ນແລ້ວ, ຢາວັກຊີນທຸກຊະນິດມີປະສິດທິພາບ. ໃນການທົດລອງທາງດ້ານການຊ່ວຍນັ້ນ, ປະກົດວ່າຢາວັກຊີນທຸກຊະນິດນີ້ ມີປະສິດທິພາບລະຫວ່າງ 72 ເຖິງ 95 ສ່ວນຮ້ອຍ ໃນການປ້ອງກັນການຕິດເຊື້ອ ໄວຣັສ ໂຄວິດ-19 ໄດ້ ແລະມີປະສິດທິພາບ 100 ສ່ວນຮ້ອຍ ໃນການປ້ອງກັນການຕ້ອງເຂົ້ານອນໂຮງໝໍແລະການເສຍຊີວິດຈາກການຕິດເຊື້ອ ໄວຣັສ ໂຄວິດ-19 ໄດ້.

## ຄຳຖາມ: ຢາວັກຊີນ ໂຄວິດ-19 ສາມາດປ່ຽນແປງພັນທຸກັມຂອງຂ້ອຍໄດ້ບໍ?

**ຄຳຕອບ:** ບໍ່, ຢາວັກຊີນບໍ່ສາມາດປ່ຽນແປງພັນທຸກັມຂອງທ່ານຈັ່ງໃດໄດ້ເລີຍ ເພາະວ່າມັນບໍ່ສາມາດເຂົ້າຮອດສ່ວນກາງຂອງເຊລລ໌ຂອງເຮົາໄດ້.

## ຄຳຖາມ: ຖ້າຫາກວ່າຂ້ອຍຜ່ານການຕິດເຊື້ອ ໄວຣັສ ໂຄວິດ-19 ມາແລ້ວ, ຂ້ອຍຄວນສັກຢາວັກຊີນບໍ?

**ຄຳຕອບ:** ແມ່ນແລ້ວ, ທ່ານສາມາດຮັບຜົນປະໂຫຍດຈາກຢາວັກຊີນໄດ້ ເຖິງແມ່ນວ່າທ່ານຈະເຄີຍຕິດເຊື້ອ ໄວຣັສ ໂຄວິດ-19 ມາແລ້ວກໍຕາມ. ການທີ່ຈະຕິດເຊື້ອເປັນຄັ້ງທີ່ສອງອາດຈະເປັນໄປໄດ້ ແລະເຮົາກໍບໍ່ຮູ້ວ່າຄັ້ງໜ້າ ອາການຈະຮ້າຍແຮງກວ່າຄາວກ່ອນຫຼືບໍ່.

## ຄຳຖາມ: ຂ້ອຍຍັງຕ້ອງໃສ່ໜ້າກາກ ຫຼື ປະຕິບັດການຢູ່ລະຍະຫ່າງກາຍກັນ ຫຼັງຈາກສັກຢາວັກຊີນຢູ່ບໍ?

**ຄຳຕອບ:** ແມ່ນແລ້ວ, ໂດຍສະເພາະເວລາເຮົາຢູ່ຮ່ວມກັນກັບຄົນນອກຄົວເຮືອນຂອງເຮົານັ້ນ ຫຼືເວລາຢູ່ສະຖານທີ່ສາທາລະນະ.

- ບໍ່, ຖ້າທ່ານຢູ່ກັນກັບຄົນອື່ນທີ່ມາຈາກຄົວເຮືອນດຽວກັນ ແລະຄົນໆ ນັ້ນບໍ່ມີໃຜມີສິດທີ່ຈະຕິດເຊື້ອພະຍາດເປັນລະດັບສູງ.
- ບໍ່, ຖ້າທ່ານຢູ່ຮ່ວມກັນກັບຄົນອື່ນທີ່ໄດ້ສັກຢາວັກຊີນຄົບໝົດແລ້ວ.

## ຄຳຖາມ: ຫຼັງຈາກສັກຢາວັກຊີນແລ້ວ, ຈະອີກດົນປານໃດກວ່າທີ່ຈະຖືວ່າຂ້ອຍໄດ້ຮັບຜົນການສັກຢາວັກຊີນແບບສົມບູນ?

**ຄຳຕອບ:** ທ່ານຖືວ່າໄດ້ຮັບຜົນການສັກຢາວັກຊີນແບບສົມບູນເມື່ອ:

- ສອງອາທິດຫຼັງຈາກສັກຢາວັກຊີນເຂັມດຽວ ຂອງ ຈອນຊັນ & ຈອນຊັນ.
- ສອງອາທິດຫຼັງຈາກສັກຢາວັກຊີນເຂັມທີ່ສອງ ຂອງ ມໍເດີນາ ຫຼື ໄຟເຊີ.

## ຄຳຖາມ: ຂ້ອຍສາມາດໄປສັກຢາວັກຊີນຢູ່ໃສໄດ້ແດ່?

**ຄຳຕອບ:** ຖ້າທ່ານຢູ່ຣັດມິນນີໂສຕ້າ:

- ກົມສາທາລະນະສຸກແຫ່ງຣັດມິນນີໂສຕ້າ mn.gov/covid19/vaccine
- ຈຸດກາງຮວບຮວມຂໍ້ມູນກ່ຽວກັບຢາວັກຊີນແຫ່ງເມືອງມິນນີແອໂປລິສ www2.minneapolismn.gov/coronavirus/vaccines
- ການສັກຢາວັກຊີນ ໂຄວິດ-19 ໂດຍທີ່ບໍ່ມີຄ່າໃຊ້ຈ່າຍ ຢູ່ເມືອງມິນນີແອໂປລິສ www.tinyurl.com/mplsvax